ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນາຍົກລັດຖະມົນຕີ

ເລກທີ 395 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 2.11.20

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມາທິການແຫ່ງຊາດການສຶກສາເພື່ອທຸກຄົນ.

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບ ເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງຕາມກົດໝາຍວ່າດ້ວຍການສຶກສາແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ເລກທີ 04/ສພຊ, ລົງວັນທີ 3 ກໍລະກົດ 2007.
- ອີງຕາມບົດບັນທຶກກອງປະຊຸມຄົບຄະນະ ຄັ້ງ ທີ V ຂອງຄະນະກຳມາທິການແຫ່ງຊາດກ່ຽວກັບການປະຕິຮູບລະບົບການສຶກສາແຫ່ງຊາດ ຄັ້ງວັນທີ 20 ເມສາ (4) 2011.
- ອີງຕາມ ການສະເໜີ ຂອງກະຊວງສຶກສາທິການ ສະບັບເລກທີ /ສສ/11, ລົງວັນທີ 04/10/2011.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ່ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ກຳນົດພາລະບົດບາດ, ໜ້າທີ່ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງຄະນະກຳມາທິການແຫ່ງຊາດການສຶກສາເພື່ອທຸກຄົນ ເພື່ອເປັນບ່ອນອີງໃຫ້ແກ່ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມາທິການດັ່ງກ່າວ ແນໃສ່ສ້າງຄວາມເຂັ້ມແຂງ, ຄວາມອາດສາມາດ ໃຫ້ແກ່ຄະນະກຳມາທິການ ໃນການປຸກລະດົມສົ່ງເສີມອົງການຈັດຕັ້ງລັດ, ອົງການຈັດຕັ້ງມະຫາຊົນ ແລະ ສັງຄົມໃນທົ່ວປະເທດ ຈັດຕັ້ງຜັນຂະຫຍາຍແຜນປະຕິບັດງານແຫ່ງຊາດ ການສຶກສາເພື່ອທຸກຄົນ ສຳລັບ (2003 - 2015) ໃຫ້ບັນລຸຜົນສຳເລັດຕາມຄາດໝາຍໃນປີ 2015.

## ໝວດທີ II
## ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມາທິການແຫ່ງຊາດການສຶກສາເພື່ອທຸກຄົນ ຊຽນຫຍໍ້ວ່າ " ຄສຄຊ " ເປັນອົງການຈັດຕັ້ງຂອງລັດຖະບານ ທີ່ເຄື່ອນໄຫວບໍ່ປະຈຳການ, ມີພາລະບົດບາດຊ່ວຍລັດຖະບານ ແລະ ນາຍົກລັດຖະມົນຕີ ໃນດ້ານ ວຽກງານການສຶກສາຂັ້ນພື້ນຖານເພື່ອທຸກຄົນ, ໂດຍສະເພາະການປຸກລະດົມຂົນຂວາຍທຶນຮອນ ແລະ ການປະກອບສ່ວນຂອງສັງຄົມໃຫ້ແກ່ການສຶກສາເພື່ອທຸກຄົນ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 3. ໂຄງປະກອບບຸກຄະລາກອນ**

ຄະນະກຳມາທິການແຫ່ງຊາດ ການສຶກສາເພື່ອທຸກຄົນປະກອບດ້ວຍບັນດາທ່ານດັ່ງລຸ່ມນີ້:

1. ທ່ານ ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ ເປັນປະທານ
2. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງການເງິນ ເປັນຮອງປະທານ
3. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ
4. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ ເປັນກຳມະການ
5. ທ່ານ ຮອງຫົວໜ້າ ຄະນະຈັດຕັ້ງສູນກາງພັກ ເປັນກຳມະການ
6. ທ່ານ ຮອງປະທານຄະນະກຳມາທິການວັດທະນະທຳສັງຄົມສະພາແຫ່ງຊາດ ເປັນກຳມະການ
7. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງຍຸຕິທຳ ເປັນກຳມະການ
8. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງສາທາລະນະສຸກ ເປັນກຳມະການ
9. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ການທ່ອງທ່ຽວ ເປັນກຳມະການ
10. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງກະສິກຳ ແລະ ປ່າໄມ້ ເປັນກຳມະການ
11. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນກຳມະການ
12. ທ່ານ ລັດຖະມົນຕີຊ່ວຍວ່າການກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ເປັນກຳມະການ
13. ທ່ານຮອງເຈົ້າແຂວງ 16 ແຂວງ 1 ນະຄອນຫລວງທົ່ວປະເທດ ເປັນກຳມະການ
14. ທ່ານ ຮອງປະທານ ສູນກາງສະຫະພັນແມ່ຍິງລາວ ເປັນກຳມະການ
15. ທ່ານ ຮອງເລຂາ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນກຳມະການ
16. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງສຶກສາທິການ ແລະ ກິລາ (ຜູ້ຊີ້ນຳກອງເລຂາ) ເປັນກຳມະການ ແລະ ເປັນເລຂາທິການ

ມາດຕາ 4. ໂຄງປະກອບກົງຈັກຊ່ວຍວຽກ

ຄະນະກຳມາທິການແຫ່ງຊາດ ການສຶກສາເພື່ອທຸກຄົນ ມີກົງຈັກຊ່ວຍວຽກຂອງຕົນ ເອີ້ນວ່າ: **ກອງເລຂາ** ຊຶ່ງປະກອບດ້ວຍ ຫົວໜ້າກົມ ແລະ ຮອງຫົວໜ້າກົມ ຂອງ ກະຊວງສຶກສາທິການ ແລະ ກິລາ :

1. ທ່ານ ຫົວໜ້າກົມອະນຸບານ ແລະ ປະຖົມສຶກສາ ເປັນຫົວໜ້າ,
2. ທ່ານ ຫົວໜ້າ/ຮອງຫົວໜ້າກົມແຜນການ ເປັນຄະນະ
3. ທ່ານ ຫົວໜ້າ/ຮອງຫົວໜ້າກົມພົວພັນຕ່າງປະເທດ ເປັນຄະນະ
4. ທ່ານ ຫົວໜ້າ/ຮອງຫົວໜ້າກົມສ້າງຄູ ເປັນຄະນະ
5. ທ່ານ ຫົວໜ້າ/ຮອງຫົວໜ້າກົມການສຶກສານອກໂຮງຮຽນ ເປັນຄະນະ
6. ທ່ານ ຫົວໜ້າ/ຮອງຫົວໜ້າກົມອາຊີວະສຶກສາ ເປັນຄະນະ

## ໝວດທີ່ IV
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 5. ໜ້າທີ່

1. ປະກອບຄຳເຫັນ, ແນະນຳ ຫຼື ສະເໜີໃຫ້ກະຊວງສຶກສາທິການ ແລະ ກິລາ ກ່ຽວກັບການກຳນົດນະໂຍບາຍ, ຍຸດທະສາດ, ແຜນການ ແລະ ໂຄງການຕ່າງໆ ໃນແຕ່ລະໄລຍະເພື່ອຜົນສຳເລັດ ຂອງແຜນປະຕິບັດງານແຫ່ງຊາດ ການສຶກສາເພື່ອທຸກຄົນ ແຕ່ປີ 2003 - 2015.
2. ຈັດຕັ້ງການຄົ້ນຄ້ວາເພື່ອຮັບຮອງເອົາຍຸດທະສາດ, ແຜນການ ແລະ ໂຄງການຕ່າງໆ ເພີ່ມເຕີມ ຕາມການສະເໜີ ຂອງ ກະຊວງສຶກສາທິການ ແລະ ກິລາ.
3. ສະເໜີລັດຖະບານ ຫຼື ນາຍົກລັດຖະມົນຕີ ເພື່ອອອກກົດໝາຍຫຼື ນິຕິກຳອື່ນໆ ທີ່ຈຳເປັນໃຫ້ ແກ່ການສຶກສາເພື່ອທຸກຄົນ.
4. ເປັນໃຈກາງໃນການຊີ້ນຳພົວພັນ, ປະສານງານກັບບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນຂັ້ນແລະ ຕ່າງປະເທດ ເພື່ອຜັນຂະຫຍາຍແຜນປະຕິບັດງານແຫ່ງຊາດ ການສຶກສາເພື່ອທຸກຄົນ.
5. ສົ່ງເສີມການລົງທຶນຂອງພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ແກ່ການສຶກສາເພື່ອທຸກຄົນ.

ມາດຕາ 6. ຂອບເຂດສິດ

ຄະນະກຳມາທິການແຫ່ງຊາດ ການສຶກສາເພື່ອທຸກຄົນ ມີສິດດັ່ງນີ້ :

1. ລະດົມທຸກກຳລັງໃນສັງຄົມ ເພື່ອປະກອບສ່ວນໃຫ້ແກ່ພາລະກິດການສຶກສາເພື່ອທຸກຄົນ ໂດຍສະເພາະແມ່ນທຶນຮອນ, ການລະດົມລູກຫຼານໃຫ້ເຂົ້າໂຮງຮຽນ, ຮຽນໃຫ້ຈົບຊັ້ນປະຖົມເປັນ ຢ່າງຕ່ຳໂດຍສະເພາະໃນບັນດາເຂດທີ່ຫ່າງໄກສອກຫຼີກທຸກຍາກ.
2. ພົວພັນ, ປະສານງານ, ແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານ ກັບ ບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນໃນປະເທດກໍຄືກັບຕ່າງປະເທດເພື່ອເຮັດໃຫ້ແຜນປະຕິບັດງານແຫ່ງຊາດ ການສຶກສາເພື່ອທຸກຄົນໃຫ້ບັນລຸຜົນຕາມຄາດໝາຍ.
3. ແຕ່ງຕັ້ງຄະນະກຳມະການການສຶກສາເພື່ອທຸກຄົນຂັ້ນແຂວງ ແລະ ຊີ້ນຳບັນດາແຂວງ (ເຈົ້າແຂວງ) ເພື່ອແຕ່ງຕັ້ງຄະນະກຳມະການການສຶກສາເພື່ອທຸກຄົນຂັ້ນເມືອງ ແລະ ຊີ້ນຳບັນດາເມືອງ (ເຈົ້າເມືອງ) ເພື່ອແຕ່ງຕັ້ງຄະນະພັດທະນາການສຶກສາຂັ້ນບ້ານ.

## ໝວດທີ V

## ແບບແຜນວິທີເຮັດວຽກ

**ມາດຕາ 7. ແບບແຜນວິທີເຮັດວຽກ**

ຄະນະກຳມາທິການແຫ່ງຊາດ ການສຶກສາເພື່ອທຸກຄົນ ເຄື່ອນໄຫວວຽກງານແບບບໍ່ປະຈຳການ ຖືເອົາກອງປະຊຸມເປັນຮູບການເຄື່ອນໄຫວຕົ້ນຕໍ. ກອງປະຊຸມຄົບຄະນະຕາມປົກກະຕິ ຂອງ ຄະນະກຳມາທິການແຫ່ງຊາດແມ່ນຈັດຂຶ້ນໃນກຳນົດປີລະໜຶ່ງຄັ້ງ; ໃນກໍລະນີຈຳເປັນ ອາດປະຊຸມຫຼາຍຄັ້ງກໍ່ໄດ້ ໃນການຕັດສິນບັນຫາຕ່າງໆໃຫ້ຖືເອົາສຽງສ່ວນຫຼາຍ ເປັນອັນຕັດສິນ.

## ໝວດທີ VI

## ບົດບັນຍັດສຸດທ້າຍ

**ມາດຕາ 8. ການຜັນຂະຫຍາຍ**

ມອບໃຫ້ປະທານຄະນະກຳມາທິການແຫ່ງຊາດການສຶກສາເພື່ອທຸກຄົນ ຜັນຂະຫຍາຍ, ກຳນົດພາລະບົດບາດ, ສິດໜ້າທີ່ ແລະ ຄວາມຮັບຜິດຊອບລະອຽດໃຫ້ແກ່ ກອງເລຂາ, ຄະນະກຳມະການຕ່າງໆ ແລະ ກຳມະການແຕ່ລະທ່ານ..

**ມາດຕາ 9. ຕາປະທັບ**

ຄະນະກຳມາທິການແຫ່ງຊາດການສຶກສາເພື່ອທຸກຄົນ ນຳໃຊ້ຕາປະທັບຂອງກົມອະນຸບານ ແລະ ປະຖົມສຶກສາ ກະຊວງສຶກສາທິການ ແລະ ກິລາ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 10. ງົບປະມານ**

ງົບປະມານຮັບໃຊ້ການເຄື່ອນໄຫວວຽກງານ ຂອງຄະນະກຳມາທິການແຫ່ງຊາດ, ກອງເລຂາ ແລະ ຄະນະກຳມະການຕ່າງໆ ກ່ຽວກັບການສຶກສາເພື່ອທຸກຄົນ ແມ່ນຂຶ້ນກັບງົບປະມານປະຈຳປີ ຂອງ ຂະແໜງການສຶກສາ ແລະ ເງິນປັນຜົນຈາກນ້ຳເທີນ II.

**ມາດຕາ 11. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ໃຫ້ຄວາມຮ່ວມມື ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ.

**ມາດຕາ 12. ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນໃຫ້ແກ່ດຳລັດວ່າດ້ວຍການແຕ່ງຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມາທິການແຫ່ງຊາດ ກ່ຽວກັບການສຶກສາເພື່ອທຸກຄົນ ເລກທີ 229/ນຍ, ລົງວັນທີ 03/10/2006.

ນາຍົກລັດຖະມົນຕີ ແຫ່ງ ສ ປປ ລາວ

ທອງສິງ ທຳມະວົງ